ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ກົມຄຸ້ມຄອງເງິນຕາຕ່າງປະເທດ

ເລກທີ 323/ກຄງຕ

ນະຄອນຫຼວງວຽງຈັນ, ວັນທີ 28 ສິງຫາ 2023

# ບົດແນະນໍາການຈັດຕັ້ງປະຕິບັດຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ເງິນຕາຕ່າງປະເທດກ່ຽວກັບການນໍາເຂົ້າ-ສົ່ງອອກສິນຄ້າ ແລະ ການບໍລິການ

- ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 15/ສພຊ, ລົງວັນທີ 7 ກໍລະກົດ 2022;
- ອີງຕາມຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 420/ທຫລ, ລົງວັນທີ 23 ພຶດສະພາ 2023;
- ອີງຕາມຂໍ້ຕົກລົງວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດກ່ຽວກັບການນໍາເຂົ້າ-ສົ່ງອອກສິນຄ້າ ແລະ ການບໍລິການ ສະບັບເລກທີ 677/ທຫລ, ລົງວັນທີ 24 ກໍລະກົດ 2023.

ເພື່ອຜັນຂະຫຍາຍບາງມາດຕາຂອງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດກ່ຽວກັບການນໍາເຂົ້າ-ສົ່ງອອກສິນຄ້າ ແລະ ການບໍລິການ (ສະບັບເລກທີ 677/ທຫລ, ລົງວັນທີ 24 ກໍລະກົດ 2023) ກ່ຽວກັບການເປີດ ຫຼື ຫັນ ແລະ ການນໍາໃຊ້ບັນຊີເງິນຝາກກ່ຽວກັບການນໍາເຂົ້າ-ສົ່ງອອກ, ການຕິດຕາມການກວດ ແລະ ລາຍງານການເຄື່ອນໄຫວຂອງບັນຊີເງິນຝາກດັ່ງກ່າວ ເພື່ອຮັບປະກັນການນໍາໃຊ້ບັນຊີເງິນຝາກໃຫ້ຖືກຕ້ອງຕາມວັດຖຸປະສົງ. ສະນັ້ນ, ກົມຄຸ້ມຄອງເງິນຕາຕ່າງປະເທດ (ກຄງຕ) ຈຶ່ງໄດ້ອອກບົດແນະນໍາ ໃຫ້ບັນດາທະນາຄານທຸລະກິດ ເພື່ອປະຕິບັດ ດັ່ງນີ້:

1. ທະນາຄານທຸລະກິດ ມີໜ້າທີ່ເປີດ ຫຼື ຫັນບັນຊີເງິນຝາກເກົ່າມາເປັນ ບັນຊີເງິນຝາກກ່ຽວກັບການນໍາເຂົ້າ-ສົ່ງອອກໃນນາມວິສາຫະກິດ ປະເພດກະແສລາຍວັນ ສະກຸນເງິນຕາຕ່າງປະເທດ ໂດຍອີງໃສ່ໜັງສືການລົງທະບຽນຜູ້ນໍາເຂົ້າ ແລະ ສົ່ງອອກທີ່ໄດ້ຮັບອະນຸຍາດຈາກ ກະຊວງອຸດສາຫະກໍາ ແລະ ການຄ້າ, ໃບຢັ້ງຢືນການແຈ້ງລົງທະບຽນຜູ້ນໍາເຂົ້າ ແລະ ສົ່ງອອກສິນຄ້າ ແລະ ການບໍລິການ ຈາກ ທະນາຄານແຫ່ງ ສປປ ລາວ ແລະ ເອກະສານອື່ນຕາມລະບຽບການຂອງທະນາຄານທຸລະກິດ; ສໍາລັບການກໍານົດເລກໝາຍບັນຊີເງິນຝາກກ່ຽວກັບການນໍາເຂົ້າ-ສົ່ງອອກ ແມ່ນໃຫ້ອີງໃສ່ໜັງສືແຈ້ງການຂອງ ກົມບັນຊີແລະການເງິນ ສະບັບເລກທີ 0058/ກບງ, ລົງວັນທີ 08 ສິງຫາ 2023 (ສໍາລັບບັນຊີເງິນຝາກສະເພາະຂອງບໍລິສັດຂຸດຄົ້ນແຮ່ທາດເພື່ອສົ່ງອອກແບບທົດລອງ ຕາມແຈ້ງການຂອງກົມນະໂຍບາຍເງິນຕາ ສະບັບເລກທີ 1120/ກນງ, ລົງວັນທີ 16 ກັນຍາ 2021 ກໍ່ໃຫ້ຫັນມານໍາໃຊ້ເລກໝາຍບັນຊີເງິນຝາກໃໝ່ທັງໝົດ);
2. ໃຫ້ທະນາຄານທຸລະກິດເປັນເຈົ້າການແຈ້ງຫາລູກຄ້າຂອງຕົນທີ່ເປັນບໍລິສັດນໍາເຂົ້າ-ສົ່ງອອກ ຊຶ່ງຍັງບໍ່ທັນໄດ້ລົງທະບຽນກັບ ກະຊວງອຸດສາຫະກໍາ ແລະ ການຄ້າ ແລະ ໄດ້ນໍາໃຊ້ບັນຊີເງິນຝາກອື່ນຮອງຮັບການຊໍາລະ-ຮັບຊໍາລະຄ່າສິນຄ້າ ແລະ ການບໍລິການກັບຕ່າງປະເທດ ກ່ອນ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດກ່ຽວກັບການນໍາເຂົ້າ-ສົ່ງອອກສິນຄ້າ ແລະ ການບໍລິການ (ສະບັບເລກທີ 677/ ທຫລ, ລົງວັນທີ 24 ກໍລະກົດ

2023) ເພື່ອເປີດ ຫຼື ຫັນບັນຊີເງິນຝາກເກົ່າມາເປັນບັນຊີເງິນຝາກກ່ຽວກັບການນຳເຂົ້າ-ສົ່ງອອກ ພາຍໃນ 3 ເດືອນ ນັບຈາກບົດແນະນຳສະບັບນີ້. ທະນາຄານທຸລະກິດສາມາດໃຫ້ບໍລິການຊຳລະ ແລະ ຮັບຊຳລະຄ່າສິນຄ້າ ແລະ ການບໍລິການ ໃຫ້ແກ່ລູກຄ້າຜູ້ນຳເຂົ້າ-ສົ່ງອອກ ໂດຍນຳໃຊ້ບັນຊີເງິນຝາກທີ່ມີຢູ່ໃນປະຈຸບັນຈົນກວ່າຈະສຳເລັດການເປີດ ຫຼື ຫັນບັນຊີເງິນຝາກເກົ່າມາເປັນ ບັນຊີເງິນຝາກກ່ຽວກັບການນຳເຂົ້າ-ສົ່ງອອກ ແຕ່ບໍ່ເກີນໄລຍະ 3 ເດືອນນັບແຕ່ວັນອອກບົດແນະນຳສະບັບນີ້. ກໍລະນີ ບໍລິສັດມີພັນທະຜູກພັນກັບຄູ່ຄ້າຢູ່ຕ່າງປະເທດ ແລະ ຈຳເປັນທີ່ຕ້ອງນຳໃຊ້ບັນຊີເງິນຝາກເກົ່າເກີນ 3 ເດືອນ ແມ່ນໃຫ້ບໍລິສັດຂໍອະນຸຍາດນຳ ກຄງຕ.

3. ການນຳໃຊ້ບັນຊີເງິນຝາກກ່ຽວກັບການນຳເຂົ້າ-ສົ່ງອອກ ສາມາດປະຕິບັດໄດ້ດັ່ງນີ້:
   - ການນຳໃຊ້ບັນຊີເງິນຝາກກັບຕ່າງປະເທດ: ເພື່ອຊຳລະ ແລະ ຮັບຊຳລະຄ່າສິນຄ້າ ແລະ ການບໍລິການກັບຕ່າງປະເທດເທົ່ານັ້ນ (ສຳລັບການໂອນເງິນທຶນ, ໂອນກຳໄລ, ເງິນກູ້ຢືມ, ເງິນປັນຜົນ ແລະ ທຸລະກຳອື່ນລະຫວ່າງປະເທດ ແມ່ນອີງໃສ່ລະບຽບການທີ່ກ່ຽວຂ້ອງ);
   - ການນຳໃຊ້ບັນຊີເງິນຝາກພາຍໃນປະເທດ: ແມ່ນສາມາດເຄື່ອນໄຫວຄືກັບບັນຊີເງິນຝາກກະແສລາຍວັນທົ່ວໄປ. ສຳລັບເງື່ອນໄຂໃນການດຳເນີນທຸລະກຳແມ່ນໃຫ້ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ.
4. ທະນາຄານທຸລະກິດ ຕ້ອງເປັນເຈົ້າການຕິດຕາມກວດກາການເປີດ ຫຼື ຫັນບັນຊີເງິນຝາກ, ຕິດຕາມການເຄື່ອນໄຫວບັນຊີເງິນຝາກຂອງຜູ້ນຳເຂົ້າ-ສົ່ງອອກ ພ້ອມທັງລາຍງານໃຫ້ ກຄງຕ ຕາມລະບອບລາຍງານທີ່ລະບຸໄວ້ໃນຂໍ້ 4 ຂອງ ມາດຕາ 9 ຂອງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດກ່ຽວກັບການນຳເຂົ້າ-ສົ່ງອອກສິນຄ້າ ແລະ ການບໍລິການ. ສະເພາະໃນໄລຍະ 3 ເດືອນ ພາຍຫຼັງນັບແຕ່ອອກບົດແນະນຳສະບັບນີ້ ໃຫ້ທະນາຄານທຸລະກິດລາຍງານປະຈຳອາທິດໃນທຸກໆວັນຈັນຂອງອາທິດຕໍ່ໄປ.
5. ສຳລັບການຕິດຕາມການເຄື່ອນໄຫວບັນຊີເງິນຝາກຂອງຜູ້ນຳເຂົ້າ-ສົ່ງອອກ ທະນາຄານທຸລະກິດຕ້ອງປະຕິບັດດັ່ງນີ້:

   5.1 **ການສົ່ງອອກ:** ທະນາຄານທຸລະກິດ ຕ້ອງເປັນເຈົ້າການໃນການຕິດຕາມລາຍຮັບຈາກການສົ່ງອອກ ໂດຍການປະສານສົມທົບກັບລູກຄ້າຂອງຕົນທີ່ເປັນຜູ້ສົ່ງອອກ ເມື່ອມີທຸລະກຳເງິນໂອນເຂົ້າບັນຊີເງິນຝາກດັ່ງກ່າວຂອງລູກຄ້າ ທຸກຄັ້ງ ເພື່ອຮຽກເກັບເອກະສານຕາມກຳນົດໃນມາດຕາ 11 ຂອງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດກ່ຽວກັບການນຳເຂົ້າ-ສົ່ງອອກສິນຄ້າ ແລະ ການບໍລິການ. ພ້ອມນີ້, ທະນາຄານທຸລະກິດຕ້ອງກວດກາ ແລະ ສົມທຽບຈຳນວນເງິນໂອນເຂົ້າບັນຊີເງິນຝາກຂອງຜູ້ສົ່ງອອກ ກັບມູນຄ່າແຈ້ງພາສີສົ່ງອອກ (ກຄງຕ ຈະສະໜອງໃຫ້ໃນແຕ່ລະໄລຍະ) ພ້ອມທັງລາຍງານມາຍັງ ກຄງຕ ທຸກໆວັນຈັນຂອງອາທິດຕໍ່ໄປ ໃນໄລຍະລໍຖ້າການພັດທະນາມີລະບົບຂໍ້ມູນຕິດຕາມໃນມື້ໆນີ້.

   5.2 **ການນຳເຂົ້າ:** ທະນາຄານທຸລະກິດ ຕ້ອງເປັນເຈົ້າການກວດກາຄວາມຖືກຕ້ອງເອກະສານກ່ຽວກັບການຊຳລະຄ່າສິນຄ້າ ແລະ ບໍລິການກັບຕ່າງປະເທດ ທີ່ໄດ້ກຳນົດໃນມາດຕາ 10 ຂອງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດກ່ຽວກັບການນຳເຂົ້າ-ສົ່ງອອກສິນຄ້າ ແລະ ການບໍລິການ. ພ້ອມທັງ ຕ້ອງຕິດຕາມການຊື້-ຂາຍເງິນຕາຕ່າງປະເທດ ເພື່ອຊຳລະຄ່າສິນຄ້າ ແລະ ບໍລິການກັບຕ່າງປະເທດ.
6. ທະນາຄານທຸລະກິດຕ້ອງລາຍງານມາຍັງ ກຄງຕ ພາຍໃນ 7 ວັນລັດຖະການ ກໍລະນີທີ່ລູກຄ້າຂອງທະນາຄານມີການປະພຶດທີ່ລະເມີດຂໍ້ຫ້າມທີ່ລະບຸໄວ້ໃນມາດຕາ 13 (ຂໍ້ 1 ຫາ ຂໍ້ 5) ຂອງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດກ່ຽວກັບການນຳເຂົ້າ-ສົ່ງອອກສິນຄ້າ ແລະ ການບໍລິການ ຫຼັງຈາກ ໄລຍະເວລາ 3 ເດືອນ ຕາມກຳນົດໃນ ຂໍ້ 2 ຂອງບົດແນະນຳສະບັບນີ້ ເພື່ອເປັນຂໍ້ມູນໃຫ້ແກ່ ກຄງຕ ໃນການປະຕິບັດມາດຕະການຕໍ່ຜູ້ລະເມີດຕາມລະບຽບການ.

7. ເອກະສານທີ່ທະນາຄານທຸລະກິດຕ້ອງລາຍງານຫາກົມຄຸ້ມຄອງເງິນຕາຕ່າງປະເທດ ມີຄືດັ່ງນີ້ :

   1) ຕາຕະລາງລາຍງານການເປີດບັນຊີເງິນຝາກກ່ຽວກັບການນຳເຂົ້າ-ສົ່ງອອກຂອງລູກຄ້າ (ຕາມແບບຟອມລາຍງານທີ 1) ;
   2) ຕາຕະລາງຕິດຕາມການເຄື່ອນໄຫວບັນຊີເງິນຝາກຂອງບໍລິສັດນຳເຂົ້າ-ສົ່ງອອກ (ຕາມແບບຟອມລາຍງານທີ 2);
   3) ຕາຕະລາງຕິດຕາມການນຳລາຍຮັບເຂົ້າບັນຊີເງິນຝາກຂອງບໍລິສັດສົ່ງອອກ (ຕາມແບບຟອມລາຍງານທີ 3);
   4) ຕາຕະລາງລາຍງານການຊື້-ຂາຍເງິນຕາຕ່າງປະເທດຂອງບໍລິສັດນຳເຂົ້າ-ສົ່ງອອກ (ຕາມແບບຟອມລາຍງານທີ 4).

ບົດແນະນຳສະບັບນີ້ ແມ່ນໃຫ້ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ. ໃນກໍລະນີ ການຈັດຕັ້ງປະຕິບັດຕົວຈິງຫາກບໍ່ສອດຄ່ອງ ແມ່ນຈະມີການປັບປຸງໃນແຕ່ລະໄລຍະ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດບົດແນະນຳສະບັບນີ້ເປັນຢ່າງດີ.

ທະນາຄານແຫ່ງ ສປປ ລາວ
ກົມຄຸ້ມຄອງເງິນຕາຕ່າງປະເທດ

ຫົວໜ້າກົມ

ເພັດສະກາພອນ ແກ້ວວົງວິຈິດ

ຕິດຕໍ່ພົວພັນ:

- ພະແນກຄຸ້ມຄອງເງິນຕາຕ່າງປະເທດດ້ານການຄ້າລະຫວ່າງປະເທດ
- ເບີໂທ: 030 537 9078

**ແບບຟອມລາຍງານທີ 1:**

ຕາຕະລາງລາຍງານການເປີດບັນຊີສະເພາະໃຫ້ແກ່ບໍລິສັດນຳເຂົ້າ-ສົ່ງອອກສິນຄ້າ ແລະ ການບໍລິການ

| ລ/ດ | ທະນາຄານ | ບັນຊີເງິນຝາກໃໝ່ | | | ເລກທະບຽນຜູ້ນຳເຂົ້າ-ສົ່ງອອກ | ເລກປະຈຳຕົວຜູ້ເສຍອາກອນ (TIN Number) | ເລກທີ ທີ່ໄດ້ຮັບ | ຫັນຈາກບັນຊີເງິນຝາກເກົ່າ | | |
|---|---|---|---|---|---|---|---|---|---|---|
| | | ຊື່ບັນຊີເງິນຝາກ | ສະກຸນເງິນ | ເລກໝາຍບັນຊີ | | | | ຊື່ບັນຊີເງິນຝາກ | ສະກຸນເງິນ | ເລກໝາຍບັນຊີ |
| 1 | | Company A | USD | | | | | Company A | USD | |
| | | | THB | | | | | | THB | |
| | | | CNY | | | | | | CNY | |
| 2 | | Company B | USD | | | | | Company B | USD | |
| | | | THB | | | | | | THB | |
| | | | CNY | | | | | | CNY | |
| 3 | | Company C | USD | | | | | Company C | USD | |
| | | | THB | | | | | | THB | |
| | | | CNY | | | | | | CNY | |

ໝາຍເຫດ:
- ຕາຕະລາງລາຍງານສະບັບນີ້ໃຫ້ນຳສົ່ງມາຍັງກົມຄຸ້ມຄອງເງິນຕາຕ່າງປະເທດໃນທຸກໆວັນຈັນ ຜ່ານຊ່ອງທາງ ອີເມວ: **fxdtradedivision@gmail.com**
- ເບີໂທຕິດຕໍ່: **030 5397078**

ຫົວໜ້າພະແນກ　　　　　　　　　　ຜູ້ສັງລວມ

ເບີໂທຜູ້ປະສານງານ

ແບບຟອມລາຍງານທີ 2:

ຕາຕະລາງຕິດຕາມການເຄື່ອນໄຫວບັນຊີຂອງບໍລິສັດນຳເຂົ້າ-ສົ່ງອອກສິນຄ້າ ແລະ ການບໍລິການ ປະຈຳອາທິດລະຫວ່າງວັນທີ...............................................

| ລ/ດ | ທະນາຄານ | ວັນທີ ດຳເນີນ ທຸລະກຳ | ຊື່ບັນຊີເງິນຝາກ | ສະກຸນເງິນ | ເລກໝາຍບັນຊີ | ເລກທະບຽນຜູ້ນຳເຂົ້າ-ສົ່ງອອກ | ເລກປະຈຳຕົວຜູ້ເສຍອາກອນ (TIN Number) | ການໂອນເງິນເຂົ້າມາຈາກຕ່າງປະເທດ | | | | ການໂອນເງິນອອກໄປຕ່າງປະເທດ | | | |
|---|---|---|---|---|---|---|---|---|---|---|---|---|---|---|---|
| | | | | | | | | ຈຳນວນເງິນເຂົ້າ | ຈຸດປະສົງການໂອນເຂົ້າ | ຊື່ຜູ້ໂອນ | ໂອນມາຈາກປະເທດ | ຈຳນວນເງິນອອກ | ຈຸດປະສົງການໂອນອອກ | ຊື່ຜູ້ຮັບເງິນ | ປະເທດທີ່ຮັບເງິນ |
| 1 | | | Company A | USD | | | | | | | | | | | |
| | | | Company A | THB | | | | | | | | | | | |
| | | | Company A | CNY | | | | | | | | | | | |
| 2 | | | Company B | USD | | | | | | | | | | | |
| | | | Company B | THB | | | | | | | | | | | |
| | | | Company B | CNY | | | | | | | | | | | |
| 3 | | | Company C | USD | | | | | | | | | | | |
| | | | Company C | THB | | | | | | | | | | | |
| | | | Company C | CNY | | | | | | | | | | | |

ໝາຍເຫດ: - ຕາຕະລາງລາຍງານສະບັບນີ້ໃຫ້ນຳສົ່ງມາຍັງກົມຄຸ້ມຄອງເງິນຕາຕ່າງປະເທດໃນທຸກໆວັນຈັນ ຜ່ານຊ່ອງທາງ ອີເມວ: fxdtradedivision@gmail.com

- ເບີໂທຕິດຕໍ່: 030 5397078

**ຫົວໜ້າພະແນກ** **ຜູ້ສັງລວມ**

ເບີໂທຜູ້ປະສານງານ

## <u>ແບບຟອມລາຍງານທີ 3:</u>

**ຕາຕະລາງການນຳລາຍຮັບເຂົ້າບັນຊີຂອງຜູ້ສົ່ງອອກ ປະຈຳອາທິດລະຫວ່າງວັນທີ..............................................................**

| ລ/ດ | ວັນທີໂອນເງິນເຂົ້າ | ເລກທີໃບໂອນເງິນ (SWIFT Reference Number) | ຊື່ຜູ້ຮັບເງິນໂອນ | ເລກທະບຽນອາກອນ | ສະກຸນເງິນ | ຈຳນວນ | ອັດຕາແລກປ່ຽນ | ທຽບເທົ່າໂດລາ (1) | ລວມມູນຄ່າທັງໝົດຈາກແຕ່ລະງວດການສົ່ງອອກ (2) | ຈຳນວນງວດສົ່ງອອກ | ສ່ວນຕ່າງ (1)-(2) | ເລກທີ Invoice |
|---|---|---|---|---|---|---|---|---|---|---|---|---|
| 1 | | | | | | | | | | | | |
| 2 | | | | | | | | | | | | |
| 3 | | | | | | | | | | | | |
| 4 | | | | | | | | | | | | |
| 5 | | | | | | | | | | | | |
| 6 | | | | | | | | | | | | |
| 7 | | | | | | | | | | | | |
| 8 | | | | | | | | | | | | |
| 9 | | | | | | | | | | | | |
| 10 | | | | | | | | | | | | |

**ໝາຍເຫດ:**

- ຕາຕະລາງລາຍງານສະບັບນີ້ໃຫ້ນຳສົ່ງມາຍັງກົມຄຸ້ມຄອງເງິນຕາຕ່າງປະເທດໃນທຸກໆວັນຈັນ ຜ່ານຊ່ອງທາງ ອີເມວ: **fxdtradedivision@gmail.com**
- ເບີໂທຕິດຕໍ່: **030 5397078**

**ຫົວໜ້າພະແນກ** **ຜູ້ສັງລວມ**

ເບີໂທຜູ້ປະສານງານ

**ແບບຟອມລາຍງານທີ 4:**

**ຕາຕະລາງລາຍງານການຊື້-ຂາຍເງິນຕາຕ່າງປະເທດຂອງບໍລິສັດນຳເຂົ້າ-ສົ່ງອອກສິນຄ້າ ແລະ ການບໍລິການ ປະຈຳອາທິດລະຫວ່າງວັນທີ.........................................**

| ລ/ດ | ທະນາຄານ | ວັນທີດຳເນີນທຸລະກຳ | ຊື່ບັນຊີເງິນຝາກ | ເລກໝາຍບັນຊີ | ເລກທະບຽນຜູ້ນຳເຂົ້າ-ສົ່ງອອກ | ເລກປະຈຳຕົວຜູ້ເສຍອາກອນ (TIN Number) | ສະກຸນເງິນ | ຈຳນວນຊື້ | ຈຳນວນຂາຍ | ອັດຕາຊື້ | ອັດຕາຂາຍ | ຊື້ຈາກ | ຂາຍໃຫ້ |
|---|---|---|---|---|---|---|---|---|---|---|---|---|---|
| 1 | | | Company A | | | | USD | 1,000,000.00 | 500,000.00 | 19,800.00 | 19,900.00 | ທະນາຄານ/ບໍລິສັດສົ່ງອອກ/ແຫຼ່ງອື່ນ (ໃຫ້ລະບຸ) | ທະນາຄານ/ບໍລິສັດນຳເຂົ້າ/ພາກສ່ວນອື່ນ (ໃຫ້ລະບຸ) |
| 2 | | | Company A | | | | THB | | 10,000,000.00 | | 580.00 | | ທະນາຄານ A |
| 3 | | | | | | | | | | | | | |
| 4 | | | | | | | | | | | | | |
| 5 | | | | | | | | | | | | | |

ໝາຍເຫດ: - ຕາຕະລາງລາຍງານສະບັບນີ້ໃຫ້ນຳສົ່ງມາຍັງກົມຄຸ້ມຄອງເງິນຕາຕ່າງປະເທດໃນທຸກໆວັນຈັນ ຜ່ານຊ່ອງທາງ ອີເມວ: fxdtradedivision@gmail.com
- ເບີໂທຕິດຕໍ່: 030 5397078

ຫົວໜ້າພະແນກ

ຜູ້ສັງລວມ

ເບີໂທຜູ້ປະສານງານ